ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

===000===

ສຳນັກງານປົກແຂວງ ຄຳມ່ວນ

ຫ້ອງວ່າການປົກຄອງແຂວງ

ເລກທີ...44.../ຫປຂ/ຄມ

ຄຳມ່ວນ, ວັນທີ 4 ກຸມພາ 2013

# ແຈ້ງການ

ເຖິງ: ບັນດາພະແນກການ, ກົມກອງ, ຫ້ອງການ, ອົງການຈັດຕັ້ງສັງຄົມ, ບັນດາເມືອງຕ່າງໆ ແລະ ຫົວໜ່ວຍທຸລະກິດຕ່າງໆອ້ອມຂ້າງແຂວງ

ເລື່ອງ: ການຈັດຕັ້ງປະຕິບັດ ລະບຽບການຄຸ້ມຄອງເງິນຕາຕ່າງປະເທດ ແລະ ສົ່ງເສີມການນຳໃຊ້ເງິນກີບ.

- ອີງຕາມ: ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 03/ສພຊ, ລົງວັນທີ 21/10/2003.
- ອີງຕາມ: ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999.
- ອີງຕາມ : ລັດຖະບັນຍັດ ຂອງ ປະທານປະເທດ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ ສະບັບເລກທີ 01/ປປທ, ລົງວັນທີ 17 ມີນາ 2008 ແລະ ບົດແນະນຳກ່ຽວກັບການຈັດຕັ້ງປະຕິບັດລັດຖະບັນຍັດດັ່ງກ່າວ ສະບັບເລກທີ 01 /ທຫລ, ລົງວັນທີ 02 ເມສາ 2010.
- ອີງຕາມ : ໃບສະເໜີ ຂອງ ທະນາຄານແຫ່ງ ສປປ ລາວ ພາກກາງ ທີ່ ແຂວງສະຫວັນນະເຂດ ສະບັບເລກທີ 13/ ທຫລ.ສຂ, ລົງວັນທີ 11 ມັງກອນ 2013.

## ຫົວໜ້າຫ້ອງວ່າການປົກຄອງແຂວງ ອອກແຈ້ງການ:

1. ໃຫ້ຫ້ອງການ, ຮ້ານຄ້າ ແລະ ບັນດາຫົວໜ່ວຍວິສາຫະກິດຕ່າງໆພາຍໃນແຂວງ ສ້າງບັນດານິຕິກຳຕ່າງໆທີ່ຕິດພັນກັບການແລກປ່ຽນຊື້-ຂາຍ, ຕິດລາຄາສິນຄ້າ ແລະ ຄ່າບໍລິການຕ່າງໆເປັນເງິນກີບ ຢ່າງເປັນເອກະພາບກັນໃນຂອບເຂດທົ່ວແຂວງ.
2. ການຊຳລະ, ຮັບຄ່າຊຳລະສິນຄ້າ ແລະ ຄ່າບໍລິການຕ່າງໆຢູ່ພາຍໃນແຂວງ ຕ້ອງຊຳລະເປັນເງິນກີບ ເພື່ອສົ່ງເສີມການນຳໃຊ້ເງິນລາວ ໃຫ້ກາຍເປັນສະຕິຊາດ ກັນຢ່າງກວ້າງຂວາງ ແລະ ທົ່ວເຖິງ.
3. ການແລກປ່ຽນເອົາເງິນກີບ ຫລື ເງິນຕາຕ່າງປະເທດ ຕ້ອງໄປແລກປ່ຽນກັບຮ້ານແລກປ່ຽນເງິນຕາ ຫລື ທະນາຄານທຸລະກິດ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ຕາມລະບຽບກົດໝາຍ.
4. ຫ້າມນຳເອົາທະນາບັດໄປວາງຂາຍ ຫລື ນຳໃຊ້ທະນາບັດໃນທາງທີ່ມີລັກສະນະທຳລາຍທະນະບັດດ້ວຍການພັບ, ຕັດ, ເຈາະຮູ, ຈີກ, ແຕ້ມ ຫຼື ຂີດຊຽນໃສ່ ຫລື ດ້ວຍວິທີການໃດໆກໍ່ຕາມ ຊຶ່ງເຮັດໃຫ້ທະນາບັດທີ່ນຳອອກສູ່ສັງຄົມນັ້ນເສຍຫາຍໃຊ້ການບໍ່ໄດ້.

ຖ້າຫາກມີການລະເມີດ 4 ຂໍ້ຂ້າງເທິງນີ້ ຖືວ່າເປັນການກະທຳຜິດຕໍ່ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05 /ສພຊ, ລົງວັນທີ 14 ຕຸລາ 1999 ແລະ ລັດຖະບັນຍັດວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ ສະບັບເລກທີ 01 /ປປທ, ລົງວັນທີ 17 ມີນາ 2008 ແລະ ຈະຖືກກ່າວເຕືອນ, ປັບໄໝ ຕາມທີ່ລະບຸໄວ້ໃນມາດຕາ 60 ຂອງກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ແລະ ໃນມາດຕາ 35, 36 ແລະ 37 ຂອງລັດຖະບັນຍັດສະບັບດັ່ງກ່າວ.

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງບັນດາຫົວໜ່ວຍທຸລະກິດ, ຫ້າງຮ້ານ ແລະ ພໍ່ແມ່ປະຊາຊົນທີ່ຢູ່ພາຍໃນແຂວງ ເພື່ອຮັບຊາບ ແລະ ພ້ອມພາກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຫົວໜ້າຫ້ອງວ່າການປົກຄອງ ແຂວງຄຳມ່ວນ

ແຂວງ ຄຳມ່ວນ ຫ້ອງວ່າການ ປົກຄອງ

ຄຳພົງ ວົງພະຈັນ